ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ເລກທີ...907.../ຊກ
ເຊກອງ, ວັນທີ...16/09/2025

# ຂໍ້ຕົກລົງ
## ວ່າດ້ວຍການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ

- **ອີງຕາມ** ມາດຕາ 20 ຂອງ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 75/ສພຊ, ລົງວັນທີ 20 ມີນາ 2025.
- **ອີງຕາມ** ມາດຕາ 41 ຂອງ ກົດໝາຍ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007 ວ່າດ້ວຍຢາເສບຕິດ.
- **ອີງຕາມ** ມາດຕາ 82 ກົດໝາຍວ່າດ້ວຍສ້າງນິຕິກຳ ( ສະບັບປັບປຸງປີ 2021 ) ເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021.
- **ອີງຕາມ** ມະຕິກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງ ຊຸດທີ II, ສະບັບເລກທີ 139/ສພຂ.ຊກ; ລົງວັນທີ 23 ກໍລະກົດ 2025.

## ເຈົ້າແຂວງ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ມາດຖານ, ຂັ້ນຕອນ ແລະ ວິທີການກ່ຽວກັບການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ມີຄວາມເປັນເອກະພາບ ແລະ ມີປະສິດທິຜົນສູງ ແນໃສ່ໃຫ້ບັນດາກົມກອງ ແລະ ຂະແໜງການຕ່າງໆ ອ້ອມຂ້າງແຂວງ ແລະ 4 ເມືອງ ປອດຈາກຢາເສບຕິດ ເພື່ອເປັນການປະກອບສ່ວນເຂົ້າໃນການປະຕິບັດວາລະແຫ່ງຊາດ ວ່າດວ້ຍ ການແກ້ໄຂບັນຫາຢາເສບຕິດຢ່າງຕັ້ງໜ້າ.

**ມາດຕາ 2 ການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ.**

ການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ ແມ່ນຂະບວນການຄັດເລືອກເອົາກົມກອງ ແລະ ຂະແໜງການຕ່າງໆ ທີ່ຂຶ້ນກັບອົງການປົກຄອງແຂວງເຊກອງ ທີ່ສາມາດປະຕິບັດໄດ້ຕາມມາດຖານ ໃນການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 3 ອະທິບາຍຄຳສັບ.**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງ ມີດັ່ງນີ້:

- ກົມກອງ ໝາຍເຖິງ: ສຳນັກງານການຈັດຕັ້ງລັດ ໃນສອງກຳລັງປະກອບອາວຸດ (ກຳລັງປ້ອງກັນຊາດ, ກຳລັງປ້ອງກັນຄວາມສະຫງົບ);
- ຂະແໜງການ ໝາຍເຖິງ: ບັນດາການຈັດຕັ້ງຂອງພັກ-ລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມຂັ້ນແຂວງ ແລະ ຂັ້ນເມືອງ;
- ປອດຢາເສບຕິດ ໝາຍເຖິງ: ບໍ່ມີຢາເສບຕິດ, ບໍ່ມີໄວ້ໃນຄອບຄອງ, ຊື້-ຂາຍ, ມົ້ວສຸມ, ບໍ່ມີຜູ້ເສບຢາເສບຕິດທຸກປະເພດ;
- ການສຸມກວດກາສານເສບຕິດ ໝາຍເຖິງ: ການຄັດຈ້ອນກຸ່ມບຸກຄົນເພື່ອກວດສານເສບຕິດ.

**ມາດຕາ 4 ນະໂຍບາຍຂອງລັດ.**

ລັດໄດ້ຖືເປັນບັນຫາສຳຄັນ ໃນການແກ້ໄຂບັນຫາຢາເສບຕິດ ເຊິ່ງໄດ້ກຳນົດເປັນວາລະແຫ່ງຊາດ, ນຳໃຊ້ຫຼາຍມາດຕະການ ເພື່ອແກ້ໄຂບັນຫາດັ່ງກ່າວເຊັ່ນ: ມາດຕະການດ້ານເສດຖະກິດ, ວັດທະນະທຳ-ສັງຄົມ, ກົດໝາຍ ແລະ ວິຊາສະເພາະ ຂອງ ຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 5 ຫຼັກການລວມ.**

ການເຄື່ອນໄຫວສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດໃຫ້ປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

1) ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ.
2) ຮັບປະກັນການປະເມີນໄປຕາມເນື້ອໃນມາດຖານທີ່ກຳນົດໄວ້.
3) ຮັບປະກັນການປະຕິບັດຕາມຂັ້ນຕອນ, ວິທີການຂອງການປະເມີນ ແລະ ຕາມກຳນົດເວລາ.
4) ຮັບປະກັນຄວາມເປັນເອກະພາບ, ໂປ່ງໃສ, ພາວະວິໄສ, ຍຸຕິທຳ ແລະ ກວດສອບໄດ້.

**ມາດຕາ 6 ຂອບເຂດການນຳໃຊ້.**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເຄື່ອນໄຫວວຽກງານ ໃນການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ ຢູ່ແຂວງເຊກອງ.

## ໝວດທີ 2

## ກົມກອງ ແລະ ຂະແໜງການປອດຢາເສບຕິດ

**ມາດຕາ 7 ການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ.**

ແມ່ນຂະບວນການຄັດເລືອກເອົາກົມກອງ ທີ່ຂຶ້ນກັບສອງກຳລັງປະກອບອາວຸດ ປກຊ-ປກສ ແລະ ຂະແໜງການຢູ່ພາຍໃນແຂວງເຊກອງ ທີ່ສາມາດປະຕິບັດໄດ້ຕາມມາດຖານເງື່ອນໄຂ, ວິທີການ ແລະ ຂັ້ນຕອນ ໃນການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ.

**ມາດຕາ 8 ເງື່ອນໄຂ, ມາດຖານໃນການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ.**

ມາດຖານໃນການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ ປະກອບມີດັ່ງນີ້:

1) ສ້າງແຜນການເຄື່ອນໄຫວໃນວຽກງານການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ ປະຈຳ 6 ເດືອນ ແລະ ປະຈຳປີຈັດຕັ້ງປະຕິບັດໃຫ້ໄດ້ 90%;

2) ນຳພາຄົ້ນຄ້ວາ, ເຜີຍແຜ່ເນື້ອໃນເອກະສານ ປຸກຈິດສຳນຶກ ໃຫ້ພະນັກງານ ກ່ຽວກັບວຽກງານການຕ້ານ ແລະ ສະກັດກັ້ນຢາເສບຕິດພາຍໃນກົມກອງ ແລະ ຂະແໜງການ ເພື່ອນຳໄປຈັດຕັ້ງຜັນຂະຫຍາຍເປັນກິດຈະກຳ ໃນຂົງເຂດຄວາມຮັບຜິດຊອບ ຂອງຕົນ, ຈັດຕັ້ງປະຕິບັດໃຫ້ໄດ້ 90 %;

3) ບຸກຄະລາກອນ ພາຍໃນກົມກອງ ແລະ ຂະແໜງການ 95 % ແມ່ນໃຫ້ໄດ້ຮັບຮູ້ ເຊື່ອມຊຶມການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບຜົນຮ້າຍ ຂອງ ຢາເສບຕິດໃນຮູບແບບຕ່າງໆຢ່າງໜ້ອຍຈັດຕັ້ງປະຕິບັດໃຫ້ໄດ້ 02 ຄັ້ງຕໍ່ປີ;

4) ພະນັກງານ ໃນກົມກອງຕ້ອງປະສະຈາກການພົວພັນກັບສິ່ງເສບຕິດທຸກປະເພດ ແລະ ທຸກຮູບແບບຄື:

- ບໍ່ມີພະນັກງານປຸກພືດໃຫ້ສານເສບຕິດ (ຊາ, ຝິ່ນ, ຕົ້ນກະທ່ອມ) ບໍ່ມີພະນັກງານຜະລິດ ແລະ ປຸງແຕ່ງຢາເສບຕິດ 100 %;
- ບໍ່ມີພະນັກງານເສບຢາເສບຕິດ 100 %;
- ບໍ່ມີພະນັກງານຄ້າ-ຂາຍ ແລະ ຈຳໜ່າຍຢາເສບຕິດ 100 %;
- ບໍ່ມີພະນັກງານທີ່ອຳນວຍຄວາມສະດວກໃນການຊຸກເຊື່ອງຢາເສບຕິດ, ສະຖານທີ່ມົ້ວສຸມ ຫຼື ບໍລິການເສບຢາເສບຕິດ 100%;
- ບໍ່ພົວພັນກັບປະກົດການຫຍໍ້ທໍ້ຕ່າງໆທີ່ເປັນການລະເມີດຕໍ່ລະບຽບກົດໝາຍ.

5) ເປັນເງື່ອນໄຂໜຶ່ງ ໃຫ້ແກ່ການຮັບຮອງ ຄະນະພັກຮາກຖານ ຫຼື ໜ່ວຍພັກຮາກຖານ ໄດ້ເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ;

6) ຜົນຂອງການສຸ່ມກວດກາສານເສບຕິດຂອງພະນັກງານພາຍໃນກົມກອງ ແລະ ຂະແໜງການນັ້ນ ຢ່າງໜ້ອຍໃຫ້ໄດ້ 5 ຄົນຂຶ້ນໄປ ແລະ ຕ້ອງປອດສານເສບຕິດ 100%.

## ໝວດທີ 3

## ຂັ້ນຕອນ, ວິທີການ ການປະເມີນສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ

**ມາດຕາ 9 ຂັ້ນຕອນການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ.**

ບັນດາກົມກອງ ແລະ ຂະແໜງການຕ່າງໆ ໃນຂອບເຂດທົ່ວແຂວງເຊກອງ ທີ່ມີຈຸດປະສົງຈະສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ ຕ້ອງປະຕິບັດດັ່ງນີ້:

1) ເຊື່ອມຊຶມ ແລະ ກຳແໜ້ນຈຸດປະສົງ, ຫຼັກການ, ເນື້ອໃນ 6 ມາດຖານທີ່ໄດ້ກຳນົດໄວ້ ໃນມາດຕາ 8;

2) ແຕ່ງຕັ້ງຄະນະກຳມະການຮັບຜິດຊອບໃນການສ້າງກົມກອງ ແລະຂະແໜງການປອດຢາເສບຕິດ;

3) ສ້າງແຜນການ,ແຜນງານອັນລະອຽດໃນການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ;

4) ຈັດຕັ້ງກອງປະຊຸມ ເພື່ອເຜີຍແຜ່ເຊື່ອມຊຶມ ແຜນການ ແລະ ຂໍ້ຕົກລົງສະບັບນີ້ ໃຫ້ແກ່ພະນັກງານລັດຖະກອນ ພາຍໃນກົມກອງ ແລະ ຂະແໜງການຂອງຕົນໃຫ້ຮັບຮູ້ ແລະ ເຂົ້າໃຈແຈ້ງກ່ຽວກັບເນື້ອໃນຈິດໃຈໃນການສ້າງກົມກອງ ແລະ ຂະແໜງກການປອດຢາເສບຕິດ;

5) ຈັດຕັ້ງການໂຄສະນາເຜີຍແຜ່ລະບຽບກົດໝາຍ ແລະ ຜົນຮ້າຍຂອງຢາເສບຕິດໃຫ້ແກ່ພະນັກງານລັດຖະກອນຢ່າງທົ່ວເຖິງ;

6) ສັ່ງບົດສະຫຼຸບລາຍງານຜົນຂອງການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ ໃນແຕ່ລະໄລຍະຫົກເດືອນ ແລະ ໜຶ່ງປີ ໃຫ້ພະແນກກວດກາ ແລະ ຄວບຄຸມຢາເສບຕິດ ກອງບັນຊາການ ປກສ ແຂວງ;

7) ໃນການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດແຕ່ລະຂັ້ນຕອນ, ແຕ່ລະໄລຍະຕ້ອງໄດ້ປະສານສົມທົບກັບ ພະແນກກວດກາ ແລະ ຄວບຄຸມຢາເສບຕິດ ກອງບັນຊາການ ປກສ ແຂວງ.

**ມາດຕາ 10 ວິທີການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ.**

ວິທີການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ ຕ້ອງໄດ້ແຕ່ງຕັ້ງ ຄະນະກຳມະການກວດກາ ການປະເມີນພາຍໃນກົມກອງ ແລະ ຂະແໜງການຂອງຕົນ ຢ່າງລະອຽດໃນແຕ່ລະມາດຖານເງື່ອນໄຂ ຖ້າຫາກວ່າມີມາດຖານໃດໜຶ່ງໃນ 06 ມາດຖານ ບໍ່ສາມາດບັນລຸໄດ້, ກົມກອງ ແລະ ຂະແໜງ ການທີ່ກ່ຽວຂ້ອງຕ້ອງໄດ້ພ້ອມພຽງກັນສຶກສາອົບຮົມຫາວິທີການແກ້ໄຂ ຈົນກ່ວາຈະປະສົບຜົນສຳເລັດ;

ຕິດຕາມກວດກາເກັບກຳຂໍ້ມູນການເຄື່ອນໄຫວ ຂອງ ພະນັກງານທັງພາຍໃນ ແລະ ນອກຫ້ອງການ ເພື່ອຊອກຮູ້ການພົວພັນສັງຄົມ ມີການກ່ຽວຂ້ອງກັບຢາເສບຕິດ ຫຼື ບໍ່ ?.

**ມາດຕາ 11 ການປະເມີນກົມກອງ ແລະ ຂະແໜງການປອດຢາເສບຕິດ.**

ການປະເມີນກົມກອງ ແລະ ຂະແໜງການປອດຢາເສບຕິດ ຕ້ອງເປີດກອງປະຊຸມ ຂອງ ຄະນະກຳມະການແກ້ໄຂບັນຫາຢາເສບຕິດຂັ້ນກົມກອງ ແລະ ຂະແໜງການ, ກອງເລຂາຄະນະກຳມະການດັ່ງກ່າວລາຍງານການຈັດຕັ້ງປະຕິບັດການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ; ຄະນະກຳມະການປະເມີນຕາມ 06 ມາດຖານ ທີ່ໄດ້ກຳນົດໄວ້ໃນ ມາດຕາ 8;

ພາຍຫຼັງການປະເມີນແລ້ວ ຕ້ອງມີບົດບັນທຶກກອງປະຊຸມ ເພື່ອເປັນບ່ອນອີງ ໃຫ້ແກ່ ຄະນະກຳມະການຂັ້ນແຂວງ ໃນການພິຈາລະນາຮັບຮອງຕາມລະບຽບກົດໝາຍ.

**ມາດຕາ 12 ການຮັບຮອງກົມກອງ ແລະ ຂະແໜງການປອດຢາເສບຕິດ.**

ພາຍຫຼັງຜ່ານຂັ້ນຕອນ, ວິທີການປະເມີນແລ້ວ ກ່ອນຈະຮັບຮອງເປັນກົມກອງ ແລະ ຂະແໜງການປອດຢາເສບຕິດ ມີດັ່ງນີ້:

1) ຕ້ອງມີບົດລາຍງານ, ບົດບັນທຶກກອງປະຊຸມຄວາມເປັນເອກະພາບໃນການປະເມີນ ຂອງ ຄະນະກຳມະການຮັບຜິດຊອບຂັ້ນກົມກອງ ແລະ ຂະແໜງການ.

2) ປະທານຄະນະກຳມະການແກ້ໄຂບັນຫາຢາເສບຕິດຂັ້ນແຂວງ ເປັນຜູ້ລົງລາຍເຊັນ ຂໍ້ຕົກລົງຮັບຮອງ ແລະ ໃບຢັ້ງຢືນກົມກອງ ແລະ ຂະແໜງການປອດຢາເສບຕິດ.

3) ກໍລະນີທີ່ ປະທານຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນແຂວງ ບໍ່ຢູ່ ໄປປະຕິບັດໜ້າທີ່ທາງໄກ ຫຼື ມີກິດທຸລະອັນຈຳເປັນ, ຈຶ່ງມອບສິດໃຫ້ຫົວໜ້າ ກອງບັນຊາການ ປກສ ແຂວງ ໃນນາມຮອງປະທານລົງລາຍເຊັນ.

**ມາດຕາ 13 ການນຳໃຊ້ງົບປະມານ.**

ການນຳໃຊ້ງົບປະມານເຂົ້າໃນການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ ແມ່ນຄວາມຮັບຜິດຊອບໂດຍກົງ ຂອງ ກົມກອງ ແລະ ຂະແໜງການນັ້ນ.

**ມາດຕາ 14 ການໃຊ້ຈ່າຍງົບປະມານ.**

1) ງົບປະມານນຳໃຊ້ເຂົ້າໃນການປະຊຸມປຶກສາຫາລື ແລະ ຈັດກິດຈະກຳກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານຢາເສບຕິດ ໃນແຕ່ລະຄັ້ງ;

2) ງົບປະມານໃຊ້ຈ່າຍໃນການກວດການ້ຳປັດສະວະໃຫ້ ພະນັກງານ-ລັດຖະກອນ ພາຍໃນຂະແໜງການ, ກົມກອງຕ້ອງໄດ້ຈ່າຍ ໃຫ້ພະແນກກວດກາ ແລະ ຄວບຄຸມຢາເສບຕິດ ປກສ ແຂວງ ຕາມແຈ້ງການ ແລະ ຂໍ້ຕົກລົງ ຂອງ ກອງບັນຊາການ ປກສ ແຂວງ;

3) ງົບປະມານ ໃຊ້ຈ່າຍຄ່າໃບຢັ້ງຢືນ ຮັບຮອງເອົາເປັນກົມກອງ ແລະ ຂະໜງການປອດຢາເສບຕິດ ຕ້ອງໄດ້ຈ່າຍໃຫ້ພະແນກກວດກາ ແລະ ຄວບຄຸມຢາເສບຕິດ ປກສ ແຂວງ ຕາມແຈ້ງການ ແລະ ຂໍ້ຕົກລົງ ຂອງ ກອງບັນຊາການ ປກສ ແຂວງ.

## ໝວດທີ 4

## ຄະນະກຳມະການຮັບຜິດຊອບການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ

**ມາດຕາ 15 ຄະນະກຳມະການຮັບຜິດຊອບຂັ້ນແຂວງ.**

ແມ່ນຄະນະກຳມະການແກ້ໄຂບັນຫາຢາເສບຕິດຂັ້ນແຂວງ ຕາມຂໍ້ຕົກລອງທ່ານເຈົ້າແຂວງ ເຊິ່ງມີສິດ ແລະ ໜ້າທີ່ ດັ່ງນີ້:

1) ຄົ້ນຄ້ວາເຊື່ອມຊຶມ ແລະ ສ້າງແຜນການເຄື່ອນໄຫວຂອງຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແລະ ຄົ້ນຄ້ວາເຊື່ອມຊຶມນິຕິກຳຕ່າງໆທີ່ກ່ຽວຂ້ອງ;

2) ຈັດຕັ້ງເຜີຍແຜ່, ຜັນຂະຫຍາຍມະຕິ, ຄຳສັ່ງ, ກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3) ປະຊຸມປຶກສາຫາລື ແລະ ຮັບການສ່ອງແສງລາຍງານສະພາບການກ່ຽວກັບວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໄລຍະ 6 ເດືອນ ແລະ ປະຈຳປີ;

4) ປະສານສົມທົບກັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາກລັດ ແລະ ເອກະຊົນໃນການລາຍງານ, ຊີ້ແຈງ ແລະ ໃຫ້ຂໍ້ມູນທີ່ກ່ຽວຂ້ອງກັບບັນຫາຢາເສບຕິດ;

5) ຄົ້ນຄ້ວານຳສະເໜີອອກໃບຢັ້ງຢືນໃຫ້ກົມກອງ ແລະ ຂະແໜງການປອດຢາເສບຕິດ ຕາມການສະເໜີຂອງກອງບັນຊາການ ປກສ ແຂວງ, ຕິດຕາມກວດກາ ຈັດກອງປະຊຸມ ແລະ ຖອດຖອນບົດຮຽນ, ຕີລາຄາປະເມີນຜົນ ໃນການຈັດຕັ້ງປະຕິບັດແຕ່ລະໄລຍະ.

6) ສະເໜີການຍ້ອງຍໍໃຫ້ກົມກອງ, ຂະແໜງການ, ພະນັກງານ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດຕາມລະບຽບການ.

7) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງຖັດຕົນ.

**ມາດຕາ 16 ຄະນະກຳມະການຂັ້ນເມືອງ.**

ແມ່ນຄະນະກຳມະການແກ້ໄຂບັນຫາຢາເສບຕິດຂັ້ນເມືອງ, ຕາມຂໍ້ຕົກລົງ ຂອງ ທ່ານ ເຈົ້າເມືອງ ເຊິ່ງມີສິດ ແລະ ໜ້າທີ່ດັ່ງນີ້:

1) ຈັດຕັ້ງເຊື່ອມຊຶມ, ຜັນຂະຫຍາຍກົດໝາຍ ແລະ ລະບຽບການ, ແຜນການ ກ່ຽວກັບການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ;

2) ເຄື່ອນໄຫວໂຄສະນາເຜີຍແຜ່ແນະນຳກົດໝາຍ, ລະບຽບການຕ່າງໆ ໃນການສ້າງກົມກອງ ແລະ ຫ້ອງການປອດຢາເສບຕິດ ໃຫ້ນິຕິບຸກຄົນ, ການຈັດຕັ້ງຮັບຮູ້ເຂົ້າໃຈ ແລະ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ;

3) ລົງຊຸກຍູ້, ຕິດຕາມ, ກວດກາຢ່າງເປັນປົກກະຕິ, ການເຄື່ອນໄຫວປະຕິບັດວຽກງານການສ້າງກົມກອງ ແລະ ຫ້ອງການປອດຢາເສບຕິດໃຫ້ມີປະສິດທິຜົນ;

4) ຕິດຕາມກວດກາການປະຕິບັດມາດຖານເງື່ອນໄຂໃນການສ້າງກົມກອງ ແລະ ຫ້ອງການປອດຢາເສບຕິດຂອງບັນດາກົມກອງ, ຫ້ອງການອອ້ມຂ້າງເມືອງ ເພື່ອລາຍງານຄະນະກຳມະການຮັບຜິດຊອບຂັ້ນແຂວງ ນຳສະເໜີຕໍ່ຂັ້ນເທິງພິຈາລະນາຮັບຮອງເອົາເປັນກົມກອງ ແລະ ຫ້ອງການປອດຢາເສບຕິດ;

5) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມຄຳສັ່ງຂອງຂັ້ນເທິງຖັດຕົ້ນ.

## ໝວດທີ 5

## ອົງການຄຸ້ມຄອງການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ

**ມາດຕາ 17 ອົງການຄຸ້ມຄອງ.**

ອົງການຄຸ້ມຄອງກົມກອງ ແລະ ຂະແໜງການປອດຢາເສບຕິດ ປະກອບມີ: ກອງບັນຊາການ ປກສ ແຂວງ ແລະ ກອງບັນຊາການ ປກສ ເມືອງ;

**ມາດຕາ 18 ກອງບັນຊາການ ປກສ ແຂວງ.**

ກອງບັນຊາການ ປກສ ແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1) ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ, ຫັນມາເປັນແຜນການ, ແຜນງານ ແລະ ໂຄງການອັນລະອຽດ;

2) ໂຄສະນາ, ສຶກສາອົບຮົມ ສອງກຳລັງປະກອບອາວຸດ, ບັນດາອົງການຈັດຕັ້ງຂັ້ນແຂວງ ໃຫ້ເຂົ້າໃຈ, ເຂົ້າຮ່ວມຂະບວນການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ;

3) ນຳພາ-ຊີ້ນຳໃນການຈັດຕັ້ງປະຕິບັດວຽກງານສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ, ເພື່ອສະເໜີຄະນະກຳມະການແກ້ໄຂບັນຫາຢາເສບຕິດຂັ້ນແຂວງຮັບຮອງ;

4) ຄຸ້ມຄອງ, ຕິດຕາມ, ກວດກາ, ປະເມີນຜົນກ່ຽວກັບການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດຢູ່ຂັ້ນແຂວງ - ເມືອງ;

5) ເປັນເຈົ້າການໃນການພົວພັນກັບຂະແໜງການອື່ນໆທີ່ກ່ຽວຂ້ອງ ໃນການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດ;

6) ສະຫຼຸບລາຍງານສະພາບການຈັດຕັ້ງປະຕິບັດການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດໃຫ້ສາຍຕັ້ງ ແລະ ສາຍຂວາງຢ່າງເປັນປົກກະຕິ.

**ມາດຕາ 19 ກອງບັນຊາການ ປກສ ເມືອງ.**

ກອງບັນຊາການ ປກສ ເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1) ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ການສ້າງກົມກອງ ແລະ ຫ້ອງການປອດຢາເສບຕິດ, ຫັນມາເປັນແຜນການ, ແຜນງານ ແລະ ໂຄງການອັນລະອຽດ;

2) ສະຫຼຸບລາຍງານສະພາບການຈັດຕັ້ງປະຕິບັດການສ້າງກົມກອງ ແລະ ຫ້ອງການປອດຢາເສບຕິດໃຫ້ສາຍຕັ້ງ ແລະ ສາຍຂວາງ ຢ່າງເປັນປົກກະຕິ, ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບການສ້າງກົມກອງ ແລະ ຫ້ອງການປອດຢາເສບຕິດ, ຫັນມາເປັນແຜນການແຜນງານ ແລະ ໂຄງການອັນລະອຽດ;

3) ໂຄສະນາ, ສຶກສາອົບຮົມ ສອງກຳລັງປະກອບອາວຸດ, ບັນດາອົງການຈັດຕັ້ງຂັ້ນເມືອງ ໃຫ້ເຂົ້າໃຈ, ເຂົ້າຮ່ວມຂະບວນການສ້າງກົມກອງ ແລະ ຫ້ອງການປອດຢາເສບຕິດ;

4) ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ກ່ຽວກັບການສ້າງກົມກອງ ແລະ ຫ້ອງການ ການປອດຢາເສບຕິດຢູ່ຂັ້ນແຂວງ ແລະ ເມືອງ.

5) ເປັນເຈົ້າການໃນການພົວພັນກັບຂະແໜງການອື່ນໆທີ່ກ່ຽວຂ້ອງ ໃນການສ້າງກົມກອງ ແລະ ຂະແໜງ ການປອດຢາເສບຕິດ.

## ໝວດທີ 6

## ຂໍ້ຫ້າມ

**ມາດຕາ 20 ສຳລັບການຈັດຕັ້ງ.**

1) ຊຸກຍູ້ ແລະ ສົ່ງເສີມ, ໃຫ້ຄຳແນະນຳ, ໃຫ້ຄຳປຶກສາແກ່ພະນັກງານ ທີ່ຢູ່ພາຍໃນກົມກອງ ແລະ ຂະແໜງການ ຂອງ ຕົນ ເຄື່ອນໄຫວ, ຂົນສົ່ງ, ຜະລິດ, ປຸງແຕ່ງ, ຊື້ - ຂາຍ, ເຊື່ອງອຳປິດບັງ ຢາເສບຕິດທີ່ຜິດກົດໝາຍ;

2) ປົກປ້ອງ ແລະ ປິດບັງຂໍ້ມູນການເຄື່ອນໄຫວ ຂອງ ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບ ຂອງຕົນທີ່ມີພຶດຕິກຳພົວພັນ, ມົ້ວສຸມກັບສິ່ງເສບຕິດ;

3) ສ້າງເງື່ອນໄຂອຳນວຍຄວາມສະດວກດ້ານສະຖານທີ່ສຳນັກງານ, ຫ້ອງການບ່ອນເຮັດວຽກ ແລະ ເຮືອນພັກ ຂອງ ລັດ ເປັນບ່ອນມົ້ວສຸມ, ຊຸກເຊື່ອງ ແລະ ຈຳໜ່າຍຢາເສບຕິດ;

4) ເຂົ້າຮ່ວມ ຫຼື ຊ່ວຍເຫຼືອດ້ານພາຫານະສ່ວນລວມ, ຍຸດໂທປະກອນ, ເຄື່ອງແບບ ແລະ ເຄື່ອງໝາຍໂລໂກ້ ຂອງ ສອງກຳລັງ, ຂະແໜງການຕ່າງໆ ໃຫ້ບຸກຄົນ, ນິຕິບຸກຄົນ, ສວຍໃຊ້ເຄື່ອນໄຫວຄ້າ-ຂາຍ ຢາເສບຕິດ.

**ມາດຕາ 21 ສຳລັບຜູ້ປົກຄອງ.**

1) ຊຸກຍູ້, ສົ່ງເສີມ, ໃຫ້ຄຳປຶກສາ, ຄຳແນະນຳແກ່ສະມາຊິກພາຍໃນຄອບຄົວ ເຂົ້າຮ່ວມຂະບວນການຄ້າ-ຂາຍ, ລຳລຽງ ແລະ ຂົນສົ່ງຢາເສບຕິດ;

2) ປິດບັງ, ປົກປ້ອງ ຫຼື ຊຸກເຊື່ອງ, ຂໍ້ມູນການເຄື່ອນໄຫວຂອງສະມາຊິກພາຍໃນຄອບຄົວທີ່ມົ້ວສຸມ ແລະ ຕິດຢາເສບຕິດ;

3) ຂັດຂວາງ, ນາບຂູ່, ບໍ່ໃຫ້ຄວາມຮ່ວມມື ແລະ ບໍ່ໃຫ້ຄວາມສະດວກ ໃນການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ກວດກາ ແລະ ຄວບຄຸມຢາເສບຕິດ;

**ມາດຕາ 22 ສຳລັບບຸກຄົນທົ່ວໄປ.**

1) ສວຍໃຊ້ວຽກງານສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດເພື່ອສະແຫວງຫາຜົນປະໂຫຍດໃຫ້ຕົນເອງຢ່າງຜິດກົດໝາຍ;

2) ໂຄສະນາຊວນເຊື່ອສ້າງສິ່ງຈູງໃຈ, ໃຊ້ເລ້ຫຼ່ຽມ, ເຮັດໃຫ້ພະນັກງານລັດ ພົວພັນກັບຢາເສບຕິດ;

3) ຂັດຂວາງ ແລະ ນາບຂູ່, ບໍ່ໃຫ້ຄວາມຮ່ວມມື, ບໍ່ໃຫ້ຄວາມສະດວກ ໃນການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ກວດກາ ແລະ ຄວບຄຸມຢາເສບຕິດ.

## ໝວດທີ 7

## ອົງການຕິດຕາມກວດກາ

**ມາດຕາ 23 ອົງການຕິດຕາມກວດກາ.**

1) ອົງການຕິດຕາມກວດກາພາຍໃນ: ແມ່ນອົງການດຽວກັບຄະນະກຳມະການແກ້ໄຂບັນຫາຢາເສບຕິດຂັ້ນແຂວງ ເຊິ່ງໄດ້ຮັບການແຕ່ງຕັ້ງ ຈາກທ່ານເຈົ້າແຂວງ ໃນແຕ່ລະໄລຍະ;

2) ອົງການຕິດຕາມກວດກາພາຍນອກປະກອບມີ: ສະພາປະຊາຊົນແຂວງ, ກວດກາລັດ, ອົງການກວດສອບປະຈຳພາກໃຕ້, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ສື່ມວນຊົນ.

**ມາດຕາ 24 ເນື້ອໃນກວດກາ.**

1) ການຈັດຕັ້ງປະຕິບັດຫຼັກການ, ລະບຽບການ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ;

2) ກວດກາການຈັດຕັ້ງປະຕິບັດແຜນການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດໃນແຕ່ລະໄລຍະ;

3) ຄຳຮ້ອງ, ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ.

**ມາດຕາ 25 ຮູບແບບການກວດກາ.**

1) ກວດກາປົກກະຕິ ແມ່ນກວດກາຕາມແຜນການ ຫົກເດືອນ ແລະ ປະຈຳປີ;

2) ກວດກາຕາມການສະເໜີ ຫຼື ການຮ້ອງຂໍ ໂດຍມີການແຈ້ງ ໃຫ້ຮູ້ລ່ວງໜ້າ ແມ່ນການກວດກາຕາມແຜນປົກກະຕິ ແຕ່ມີການແຈ້ງໃຫ້ເປົ້າໝາຍກວດກາ ຊາບລ່ວງໜ້າກ່ອນ;

3) ກວດກາໃນກໍລະນີສຸກເສີນແມ່ນການກວດກາອັນຮີບດ່ວນ ແລະ ບໍ່ຢູ່ໃນແຜນການ.

## ໝວດທີ 8

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 26 ນະໂຍບາຍຕໍ່ຜູ້ມີຜົນງານ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ປະກອບສ່ວນດ້ານເຫື່ອແຮງສະຕິປັນຍາ ແລະ ຊັບສິນເຂົ້າໃນການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ.

**ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຫາກລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນລົງວິໄນປັບໄໝ ຫຼື ຖືກລົງໂທດຕາມກົດໝາຍ.

## ໝວດທີ 9

## ບົດບັນຍັດສຸດທ້າຍ

**ມາດຕາ 28 ການຈັດຕັ້ງປະຕິບັດ.**

ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແລະ ກອງເລຂາປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ ແລະ ລາຍງານສະພາບການເຄື່ອນໄຫວໃນການສ້າງກົມກອງ ແລະ ຂະແໜງການປອດຢາເສບຕິດຢູ່ແຂວງເຊກອງ ໃຫ້ຂັ້ນເທິງຊາບຢ່າງໜ້ອຍປີລະ 02 ຄັ້ງ.

**ມາດຕາ 29 ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການສາມສິບວັນເປັນຕົ້ນໄປ.

**ຮັກສາການແທນ ເຈົ້າແຂວງ**

ບຸນທາຍ ບຸດທີ